ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ບໍລິສັດ ຊີມັງລາວ ມະຫາຊົນ

LAO CEMENT PUBLIC COMPANY

ບ້ານໂພນພະເນົາ ວຽງຈັນ, ສ.ປ.ປ.ລາວ ຕູ້ປນ 6821, ໂທຣ: (865-21) 451222,451116 ແຟັກ: 451117

PHONPHANAO VILLAGE,VIENTIANE, LAO P.D.R. P.O.BOX 6821, TEL : (856 - 21) 451222,451116 FAX:451117

E-mail:Lcc@laocement.com,www.laocement.com

ເລກທີ 140 /ບຊລ

ນະຄອນຫຼວງວຽງຈັນ, ວັນທີ 24 JUN 2020

ຮຽນ : ທ່ານ ຫົວໜ້າສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ ທີ່ນັບຖື;

ທ່ານ ຜູ້ອຳນວຍການໃຫ່ຍ ຕະຫຼາດຫຼັກຊັບລາວ ທີ່ນັບຖື;

ທ່ານ ຜູ້ຖືຮຸ້ນ ບໍລິສັດ ຊີມັງລາວ ມະຫາຊົນ ທີ່ນັບຖື,

ເລື່ອງ : ແຈ້ງມະຕິທີ່ສຳຄັນຂອງກອງປະຊຸມສະພາບໍລິຫານ ຄັ້ງທີ 1 ປີ 2020

- ອີງຕາມຂໍ້ຕົກລົງວ່າດ້ວຍການລາຍງານ ແລະ ການເປີດເຜີຍຂໍ້ມູນ (ສະບັບປັບປຸງ) ຂອງ ສຄຄຊ ສະບັບ ເລກທີ 04/ສສຄ ລົງວັນທີ 28 ມັງກອນ ປີ 2019.
- ອີງຕາມລະບຽບຂອງຕະຫຼາດຫຼັກຊັບລາວວ່າດ້ວຍການເປີດເຜີຍຂໍ້ມູນ ສະບັບເລກທີ 008/ຕລຊລ, ລົງ ວັນທີ 27 ກັນຍາ 2018.

ບໍລິສັດ ຊີມັງລາວ ມະຫາຊົນ (ບຊລ) ຂໍຖືເປັນກຽດແຈ້ງມະຕິທີ່ສຳຄັນ ຂອງກອງປະຊຸມສະພາບໍລິຫານ ຄັ້ງທີ 01 ປີ 2020 ວັນທີ 23 ມິຖຸນາ 2020 ເຊິ່ງມີລາຍລະອຽດດັ່ງລຸ່ມນີ້ :

1. ພິຈາລະນາ ແລະ ຮັບຮອງມື້ປິດປຶ້ມວັນທີ 25 ມິຖຸນາ 2020 ເພື່ອກຳນົດສິດຜູ້ເຂົ້າຮ່ວມກອງປະຊຸມຜູ້ຖືຮຸ້ນ ແລະ ກຳນົດເອົາວັນທີ 30 ມິຖຸນາ 2020 ເປັນມື້ຈັດກອງປະຊຸມ.
2. ພິຈາລະນາ ແລະ ຮັບຮອງວາລະກອງປະຊຸມຜູ້ຖືຮຸ້ນ ປະຈຳປີ 2019 ເຊິ່ງມີລາຍລະອຽດດັ່ງນີ້:

ວາລະທີ 1 : ພິຈາລະນາ ແລະ ຮັບຮອງລາຍງານຜົນການຈັດຕັ້ງປະຕິບັດມະຕິກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີຜ່ານມາ.

ວາລະທີ 2 : ພິຈາລະນາ ແລະ ຮັບຮອງປົດບັນທຶກກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2018.

ວາລະທີ 3 : ພິຈາລະນາ ແລະ ຮັບຮອງການປ່ຽນແປງສະມາຊິກສະພາບໍລິຫານຂອງ LCC

ວາລະທີ 4 : ພິຈາລະນາ ແລະ ຮັບຮອງປົດລາຍງານວຽກງານການດຳເນີນທຸລະກິດປະຈຳປີ 2019

ວາລະທີ 5 : ພິຈາລະນາ ແລະ ຮັບຮອງປົດລາຍງານວຽກງານການເງິນປີ 2019

ວາລະທີ 6 : ພິຈາລະນາ ແລະ ຮັບຮອງທິດທາງປັນຜົນປີ 2019

ວາລະທີ 7 : ພິຈາລະນາ ແລະ ຮັບຮອງແຜນດຳເນີນທຸລະກິດການຜະລິດ ປີ 2020.

ດັ່ງນັ້ນ, ຈຶ່ງຮຽນມາເພື່ອຊາບ ແລະໃຊ້ຕາງລາຍງານ.

ດ້ວຍຄວາມນັບຖືຢ່າງສູງ.

ບໍລິສັດ ຊີມັງລາວ ມະຫາຊົນ

ປະທານສະພາບໍລິຫານ



ຫຼີວເຫວີຍ